ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===------

ກະຊວງອຸດສາຫະກຳ ແລະການຄ້າ

ຫ້ອງການ

1615 - ຫ

ເລກທີ ......./ຫອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 06 JUL 2010

# ແຈ້ງການ

ຮຽນ: - ທ່ານ ຫົວໜ້າຫ້ອງການກະຊວງການເງິນ;

- ທ່ານ ຫົວໜ້າຫ້ອງການກະຊວງແຜນການ ແລະ ການລົງທຶນ;
- ທ່ານຫົວໜ້າຫ້ອງວ່າການແຂວງ ຫຼວງພະບາງ;
- ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.

**ເລື່ອງ:** ການດຳເນີນທຸລະກິດຢາສູບ ແລະ ສົ່ງເສີມ ການຜະລິດໃບຢາສູບ ຢູ່ ສປປ ລາວ.

- ອີງຕາມ ບົດລາຍງານ ສະບັບເລກທີ 0664/ຄພນ.ຈຄກ; ລົງວັນທີ 14/6/2010 ກ່ຽວກັບຜົນການລົງເກັບກຳຂໍ້ມູນກ່ຽວກັບການດຳເນີນທຸລະກິດຢາສູບ ແລະ ສົ່ງເສີມ ການຜະລິດໃບຢາສູບ ຢູ່ 5 ແຂວງພາກເໜືອ.
- ອີງຕາມທິດຊີ້ນຳຂອງທ່ານລັດຖະມົນຕີຊ່ວຍວ່າການກະຊວງອຸດສາຫະກຳ ແລະ ການຄ້າ ຕັ້ງວັນທີ 15/6/2010.

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານດັ່ງນີ້:

- ຕໍ່ກັບການກວດກາຢາສູບທີ່ນຳມາຈຳໜ່າຍຜິດຕໍ່ລະບຽບກົດໝາຍນັ້ນ ຂະແໜງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງຕິດຕາມກວດກາເປັນແຕ່ລະໄລຍະ ແລະ ມີມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ.
- ສຳລັບການອະນຸຍາດນຳເຂົ້າໃບຢາສູບແຫ້ງເພື່ອສົ່ງອອກ ເຫັນວ່າບໍ່ສອດຄ່ອງກັບແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 617/ ຄລບ, ລົງວັນທີ 1/4/2008 ກ່ຽວກັບການສະເໜີວິທີແກ້ໄຂບັນຫາການນຳເຂົ້າໃບຢາສູບຈາກຕ່າງປະເທດ ຜ່ານ ສປປ ລາວ ໄປປະເທດທີ 3, ບັນຫາດັ່ງກ່າວ ສະເໜີຂະແໜງການເງິນ(ກົມພາສີ) ກວດກາຄືນການອອກອະນຸຍາດນຳເຂົ້າເພື່ອສົ່ງອອກ ຄວນປະຕິບັດຕາມທີ່ໄດ້ກຳນົດໄວ້ໃນແຈ້ງການສະບັບດັ່ງກ່າວ.
- ສະເໜີຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ ກວດກາຄືນກ່ຽວກັບ ການນຳເຂົ້າເພື່ອທຳການຜະລິດຂອງບໍລິສັດ ທັຣສໄທ ບັກໂກແຂວງຫຼວງພະບາງ, ບໍລິສັດ ໂຊກດີ ສະຫວັນນະເຂດ ຄວນປະຕິບັດຕາມແຈ້ງການ ຂອງກະຊວງອຸດສາ ຫະກຳ ແລະ ຫັດຖະກຳ ສະບັບເລກ ທີ 224/ອຫ, ລົງວັນທີ 9/6/2003 ການນຳເຂົ້າໃບຢາ, ຢາເສັ້ນ ແມ່ນບໍ່ໃຫ້ເກີນ 20% ຂອງແຜນດຸນການນຳໃຊ້ ວັດຖຸດິບຂອງໂຮງງານ, ຖ້າມີການນຳເຂົ້າມາເກີນ 20% ຂອງແຜນດູນ ກໍໃຫ້ເສຍພາສີອາກອນຕາມລະບຽບການ.
- ການອອກໃບອະນຸຍາດລົງທຶນໃຫ້ບໍລິດສັດ ທັຣສ ໄທບັກໂກ ທີ່ແຂວງຫຼວງພະບາງອອກໃຫ້ ພ້ອມທັງອະນຸຍາດໃຫ້ນຳເຂົ້າໃບຢາ 50% ເພື່ອທຳການຜະລິດນັ້ນ ເຫັນວ່າຂັດກັບດຳລັດເລກ 301/ນຍ, ລົງວັນທີ

12/10/2005, ແຈ້ງການເລກທີ 233/ຄລບ, ລົງວັນທີ 12/2/2007 ກ່ຽວກັບການລົງທຶນກິດຈະການຢາສູບ; ສະເໜີແຂວງເບິ່ງຄືນບັນຫາດັ່ງກ່າວ.

- ຕໍ່ກັບບໍລິສັດຢາສູບລາວ ທຽນຫຼົງ ແມ່ນເຫັນວ່າໄດ້ປະຕິບັດຕາມຂັ້ນຕອນທີ່ພາກລັດໄດ້ແນະນຳ ແລະ ບໍລິສັດກໍໄດ້ປະກອບເອກະສານສົ່ງມາກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ແລ້ວ, ສະເໜີ ກົມສົ່ງເສີມການລົງທຶນ ມີວິທີການແກ້ໄຂ ແຈ້ງໃຫ້ບໍລິສັດຊາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ

ບຸນມີ ນະເກີວົງ

ບ່ອນສົ່ງ:

- ກົມຕຳຫຼວດເສດຖະກິດ ເພື່ອຊາບ
- ກົມກວດກາການເງິນ ເພື່ອຊາບ